# ພະນັກງານທະນາຄານ 40 ກວ່າຄົນໄດ້ຍົກລະດັບທິດສະດີການເມືອງຊັ້ນຕົ້ນ




ຊຸດອົບຮົມທິດສະດີການເມືອງຊັ້ນຕົ້ນຊຸດທີ VI ໃຫ້ພະນັກງານທະນາຄານ ໄດ້ສຳເລັດລົງຢ່າງສະຫງ່າງາມໃນວັນທີ 1 ທັນວາ 2011 ເຊິ່ງໄດ້ດຳເນີນມາເປັນເວລາ 3 ເດືອນ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ສົມພາວ ໄຟສິດ ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມນີ້ກໍມີຜູ້ຕາງໜ້າຈາກຄະນະໂຄສະນາອົບຮົມສູນກາງພັກ, ຄະນະຈັດຕັ້ງສູນກາງພັກ, ບັນດາພະນັກງານຂັ້ນນຳ ແລະ ນັກສຳມະນາກອນເຂົ້າຮ່ວມຢ່າງພ້ອມພຽງ.

ການຝຶກອົບຮົມໃນຄັ້ງນີ້ມີພາກທິດສະດີການເມືອງປະກອບມີປະຫວັດສາດລາວ, ພື້ນຖານຄວາມຮູ້ກ່ຽວກັບລັດທິມາກ-ເລນິນ, ປັຊະຍາມາກ-ເລນິນ, ເສດຖະສາດ-ການເມືອງ, ລັດທິສັງຄົມນິຍົມວິທະຍາສາດ, ເສັ້ນ

ທາງຂະຫຍາຍຕົວຂອງລັດ ສປປ ລາວ, ເອກະສານພັກປະຊາຊົນປະຕິວັດລາວ, ກົດໝາຍ ແລະ ການບໍລິຫານລັດ ແລະ ວຽກງານພັກພະນັກງານ.

ພາຍຫຼັງຄົ້ນຄວ້າເຊື່ອມຊຶມທິດສະດີແລ້ວ ບັນດານັກຝຶກອົບຮົມກໍໄດ້ໄປທັດສະນະສຶກສາຖອດຖອນບົດຮຽນແຫ່ງການກໍ່ສ້າງຮາກຖານພັກ ແລະ ການພັດທະນາເສດຖະກິດ-ສັງຄົມຂອງກຸ່ມບ້ານພັດທະນາຜັກເບືອກ ເມືອງບໍລິຄັນ ແຂວງບໍລິຄຳໄຊ, ເຂດເສດຖະກິດພິເສດສະຫວັນ-ເຊໂນ ແລະ ເຄື່ອນໄຫວຢ້ຽມຢາມການໃຫ້ບໍລິການຢູ່ສາຂາທະນາຄານທຸລະກິດຢູ່ແຂວງສະຫວັນນະເຂດ.

ການຝຶກອົບຮົມຄັ້ງນີ້ ສາມາດເກັບກ່ຽວຄະແນນປະເພດດີເດັ່ນ (ຄະແນນບໍ່ຫຼຸດ A ) ກວມ 5% ປະເພດເດັ່ນ (ຄະແນນ A ເປັນສ່ວນໃຫຍ່ ແຕ່ບໍ່ຫຼຸດ B+) ກວມ 32,5% ແລະ ປະເພດດີ (ຄະແນນບໍ່ຫຼຸດ B) ກວມ 32,5% ແລະ ຄະແນນສະເລ່ຍ (ສອບເສັງປາກເປົ່າ-ຂຽນບົດເກັບກ່ຽວ) ດີເດັ່ນກວມ 5% ຄື: ສະຫາຍນາງ ສີພະຈັນ ເຂັມມະນີວົງ ແລະ ສະຫາຍ ພູທອນ ດວງພະຈັນ, ປະເພດເດັ່ນ 20% ແລະ ປະເພດດີ 75%.

ໃນໂອກາດດັ່ງກ່າວ ທ່ານ ສົມພາວ ໄຟສິດ ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ໃຫ້ກຽດໂອ້ລົມ ໂດຍທ່ານໄດ້ຍ້ອງຍໍຊົມເຊີຍຕໍ່ຄວາມອົດທົນບາກບັ່ນພະຍາຍາມຂອງບັນດາຄະນະຮັບຜິດຊອບ, ອາຈານ ແລະ ນັກຝຶກອົບຮົມທີ່ສາມາດເຮັດໃຫ້ການຝຶກອົບຮົມຄັ້ງນີ້ໄດ້ຮັບຜົນສຳເລັດຢ່າງດີງາມ ແລະ ທ່ານຍັງຮຽກຮ້ອງໃຫ້ທຸກຄົນຈົ່ງສືບຕໍ່ນຳເອົາໝາກຜົນຂອງການຄົ້ນຄວ້າສຶກສາໃນຄັ້ງນີ້ໄປຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຕົວຈິງໃຫ້ແຕກດອກອອກຜົນຍິ່ງໆຂຶ້ນ.